ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 76 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 07 ເມສາ 2021

# ແຈ້ງການ

ເຖິງ: - ບັນດາກົມ ແລະ ທຽບເທົ່າກົມ ພາຍໃນ ທຫລ, ສາຂາ ທຫລ ປະຈໍາພາກ, ທະນາຄານທຸລະກິດລັດ, ເອກະຊົນ ແລະ ສະຖາບັນການເງິນຈຸລະພາກ;

- ນັກຮຽນ, ນັກສຶກສາ, ປັນຍາຊົນ ແລະ ບັນດາທ່ານຜູ້ທີ່ມີຄວາມມັກຮັກໃນການຂຽນ.

ເລື່ອງ: ປະກອບສ່ວນສົ່ງບົດຄວາມ, ບົດຄົ້ນຄວ້າ, ບົດວິໄຈ, ຂ່າວ ແລະ ການເຄື່ອນໄຫວຕ່າງໆ ພາຍໃນກົມກອງຂອງທ່ານເພື່ອລົງໃນວາລະສານ "ການທະນາຄານ".

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ວາລະສານ "ການທະນາຄານ (Bank Journal)" ເປັນວາລະສານສະບັບໄຕມາດ, ເລີ່ມຈັດພິມຕັ້ງແຕ່ປີ 2009 ເປັນຕົ້ນມາ ເຊິ່ງຜ່ານມາໄດ້ມີບົດຫຼາຍປະເພດຈາກການປະກອບສ່ວນຢ່າງຕັ້ງໜ້າຂອງພະນັກງານໃນຂະແໜງການທະນາຄານ. ດັ່ງນັ້ນ, ເພື່ອເຮັດໃຫ້ວາລະສານການທະນາຄານສະບັບຕໍ່ໆໄປມີສີສັນຫຼາກຫຼາຍ ແລະ ມີສ່ວນຮ່ວມຈາກຜູ້ອ່ານຫຼາຍຂຶ້ນ; ຫ້ອງການ ທຫລ ຈຶ່ງຂໍແຈ້ງມາຍັງບັນດາທ່ານເພື່ອສົ່ງບົດຄວາມ, ບົດຄົ້ນຄວ້າ, ບົດວິໄຈ, ຂ່າວ ແລະ ການເຄື່ອນໄຫວຕ່າງໆ ທີ່ຕິດພັນກັບວຽກງານຂະແໜງການທະນາຄານ, ເສດຖະກິດ, ການເງິນ-ເງິນຕາ, ວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນ, ບົດແປຈາກພາສາຕ່າງປະເທດ ແລະອື່ນໆ ປະກອບເຂົ້າໃນວາລະສານການທະນາຄານໃນສະບັບຕໍ່ໆໄປ ເຊິ່ງບົດທີ່ໄດ້ຮັບການຄັດເລືອກລົງໃນວາລະສານຈະມີຄ່ານາມປາກກາໃຫ້ຕາມຄວາມເໝາະສົມ.

ບົດຕ່າງໆທີ່ສົ່ງມາກະລຸນາບອກແຈ້ງຊື່ຜູ້ຂຽນ ຫຼື ນາມປາກກາ, ເບີໂທ ແລະ ບ່ອນສັງກັດ ໂດຍສົ່ງເປັນເອກະສານ ແລະ ນໍາສົ່ງເປັນຟາຍ (file) ມາຍັງໜ່ວຍງານຂ່າວສານ, ພະແນກສັງລວມ, ຫ້ອງການ ທຫລ, ຕົວອັກສອນທີ່ນໍາໃຊ້ແມ່ນ Phetsarath OT, ຂະໜາດ 12 ຄວາມຍາວ 1 ໜ້າ A4 ຂຶ້ນໄປ ແລະ ມີພາບປະກອບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມືດ້ວຍ.

ຮ. ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສາຍສະໝອນ ກົບເກສອນ

ຜູ້ປະສານງານ: ນ. ປາໄນ ພັນທະລາ

ໂທ: 020 7898 1991